ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ **5404** /ຜ-ຟຟລ
ນະຄອນຫຼວງວຽງຈັນ, ວັນທີ **19 ພະຈິກ 2026**

ໜັງສືລາຍງານ

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖືຢ່າງສູງ,
ທ່ານ ຜູ້ອຳນວຍການໃຫຍ່ ບໍລິສັດ ຕະຫຼາດຫຼັກຊັບລາວ ຈຳກັດ ທີ່ນັບຖືຢ່າງສູງ,
ທ່ານ ຜູ້ຖືຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ທີ່ນັບຖືຢ່າງສູງ,

ເລື່ອງ: ແຈ້ງມະຕິກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2026.

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ) ສະບັບເລກທີ 33/ສພຊ, ລົງວັນທີ 29 ທັນວາ 2022;
- ອີງຕາມ ຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ຂອງ ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ (ສະບັບປັບປຸງ) ສະບັບເລກທີ 15/ຄຄຊ, ລົງວັນທີ 11 ທັນວາ 2024;
- ອີງຕາມ ລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/LSX, ລົງວັນທີ 27 ກັນຍາ 2018.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ("ບໍລິສັດ") ຂໍຖືເປັນກຽດແຈ້ງມະຕິ ຂອງກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2026 ທີ່ໄດ້ຈັດຂຶ້ນໃນວັນທີ 19 ພະຈິກ 2026, ດັ່ງມີລາຍລະອຽດລຸ່ມນີ້:

ວາລະທີ 1: ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2025. ກອງປະຊຸມໄດ້ມີມະຕິ ດ້ວຍຄະແນນ ສຽງ ຫລາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງຫມົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- ເຫັນດີຈຳນວນ 1,509,280,959 ສຽງ, ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງຫມົດທີ່ເຂົ້າ ຮ່ວມກອງປະຊຸມ.

ວາລະທີ 2: ຮັບຮອງການແຕ່ງຕັ້ງ ຮັກສາການຜູ້ອຳນວຍການໃຫຍ່ (ຜູ້ໃຫມ່) ເພື່ອປ່ຽນແທນ ຜູ້ອຳນວຍການໃຫຍ່ (ຜູ້ ເກົ່າ) ທີ່ຖືກແຕ່ງຕັ້ງໄປຮັບໜ້າທີ່ໃຫມ່, ກອງປະຊຸມໄດ້ມີມະຕິ ດ້ວຍຄະແນນສຽງ ຫລາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງຫມົດຂອງຜູ້ຖືຮຸ້ນທີ່ເຂົ້າ ຮ່ວມກອງປະຊຸມ ດັ່ງນີ້:

- ເຫັນດີຈຳນວນ 1,509,279,159 ສຽງ, ເທົ່າກັບ 99.999881 ສ່ວນຮ້ອຍ ຂອງຈຳນວນສຽງທັງຫມົດທີ່ ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ 1,800 ສຽງ, ເທົ່າກັບ 0.000119 ສ່ວນຮ້ອຍ ຂອງຈຳນວນສຽງທັງຫມົດທີ່ເຂົ້າຮ່ວມ ກອງປະຊຸມ.

ວາລະທີ 3: ກອງປະຊຸມ ມີມະຕິ ບໍ່ເຫັນດີຮັບຮອງການໂອນຮຸ້ນຂອງ ຜ-ຟຟລ ທີ່ຖືຄອງໃນບໍລິສັດ ເທີນ-ຫີນບູນ ພາວ ເວີ ຈຳກັດ ຈຳນວນ 660,000 ຮຸ້ນ ຄິດເປັນສັດສ່ວນ 60% ໃນມູນຄ່າຄົງທີ່ 375,000,000 ໂດລາ ສະຫະລັດ ໃຫ້ກັບ ກຸ່ມບໍລິສັດ ຟົງຊັບທະວີ ຈຳກັດຜູ້ດຽວ, ເນື່ອງຈາກ ຈຳນວນຮຸ້ນ (ສຽງ) ທີ່ເຂົ້າຮ່ວມ

ກອງປະຊຸມ ເຫັນດີເກີນ ສອງສ່ວນສາມ (2/3) ຂອງຈຳນວນສຽງ ທີ່ເຂົ້າຮ່ວມກອງປະຊຸມ, ແຕ່ລວມກັນ ບໍ່ເຖິງ 80 ສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ, ລາຍລະອຽດຄະແນນສຽງ ດັ່ງນີ້:

(1) ຈຳນວນຄົນຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ ທັງໝົດ 33 ຄົນ ເທົ່າກັບ 100 ສ່ວນຮ້ອຍ.

- ເຫັນດີ 22 ຄົນ ເທົ່າກັບ 66.67 ສ່ວນຮ້ອຍ ທຽບໃສ່ຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີ 11 ຄົນ ເທົ່າກັບ 33.33 ສ່ວນຮ້ອຍ ທຽບໃສ່ຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

(2) ຈຳນວນຮຸ້ນ (ສຽງ) ຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມທັງໝົດ 1,509,280,959 ຮຸ້ນ ເທົ່າກັບ 100 ສ່ວນຮ້ອຍ, ທຽບໃສ່ຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ ເທົ່າກັບ 89.875403 ສ່ວນຮ້ອຍ.

- ເຫັນດີ 1,339,253,526 ຮຸ້ນ (ສຽງ), ເທົ່າກັບ 88.734541 ສ່ວນຮ້ອຍ ຂອງຈຳນວນສຽງ ທີ່ເຂົ້າຮ່ວມກອງປະຊຸມ ແລະ ເທົ່າກັບ 79.750526 ສ່ວນຮ້ອຍ ທຽບໃສ່ຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ.
- ບໍ່ເຫັນດີ 170,027,433 ຮຸ້ນ (ສຽງ), ເທົ່າກັບ 11.265459 ສ່ວນຮ້ອຍ ຂອງຈຳນວນສຽງ ທີ່ເຂົ້າຮ່ວມກອງປະຊຸມ ແລະ ເທົ່າກັບ 10.124877 ສ່ວນຮ້ອຍ ທຽບໃສ່ ຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ.

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະ ເປັນຂໍ້ມູນລາຍງານ.

ດ້ວຍຄວາມນັບຖືຢ່າງສູງ,

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ປະທານສະພາບໍລິຫານ

ທ່ານ ສຸລິວັດ ສຸວັນມະຈູມຄຳ